

# ຄູ່ມືການປູກເບ້ຍຊາ

## ຈາກກຸ່ມຊາວສວນຊາ ບ້ານ ຍອດປ່ຽງ ແລະ ບ້ານ ໂພນ

ຈຸດປະສົງເພື່ອຂະຫຍາຍພື້ນທີ່ສວນຊາ ແລະ ປູກທົດແທນຕົ້ນຊາບາງຕົ້ນທີ່ຕາຍ ຫຼື ເປັນພະຍາດ. ຊາວສວນຊາບ້ານ ຍອດປ່ຽງ ແລະ ບ້ານໂພນ, ເມືອງແປກ, ແຂວງ ຊຽງຂວາງ ມີການປູກຕົ້ນຊາເພີ່ມຂຶ້ນທຸກປີ ໂດຍເຕັກນິກການປູກຊາແມ່ນໄດ້ຈາກປະສົບການ ຂອງຊາວສວນພາຍໃນບ້ານ ແລະ ການສຶກສາ ແລກປ່ຽນບົດຮຽນກັບ ວິຊາການ ແລະ ກຸ່ມຊາວສວນຊາທີ່ປາກຊ່ອງ.

## ລະດູການປູກເບ້ຍຊາ

ລະດູການປູກເບ້ຍຊາແມ່ນເລີ່ມແຕ່ເດືອນ ມິຖຸນາ ເຖິງກາງ ເດືອນ ກໍລະກົດ (ຊ້າສຸດບໍ່ຄວນກາຍທ້າຍເດືອນ ກໍລະກົດ) ໄລຍະນີ້ ເປັນເວລາທີ່ດິນຟ້າອາກາດເໝາະສົມໃນການປູກ ເພາະມີຝົນ ສະດວກແກ່ຊາວສວນທີ່ເຮັດສວນເທິງພູຫ່າງໄກຈາກນໍ້າ.








## ການກະກຽມພື້ນທີ່ປູກເບ້ຍຊາ

ກ່ອນທີ່ຈະນຳເອົາເບ້ຍຊາມາລົງປູກໃສ່ໃນສວນຊາແມ່ນຕ້ອງກະກຽມພື້ນທີ່ກ່ອນດັ່ງນີ້:



ເດືອນ ກຸມພາ, ຖາງພື້ນທີ່ (ໃນຂອບເຂດ ທີ່ອົງການຈັດຕັ້ງອະນຸມັດໃຫ້ປູກ)

ເດືອນ ມີນາ, ຈູດພື້ນທີ່




ເດືອນ ພຶດສະພາ, ເລີ່ມຂຸດຂຸມຄວາມຫ່າງລະຫວ່າງຂຸມ ແມ່ນ 120-150 ຊມ ຄວາມຫ່າງລະຫວ່າງແຖວ ແມ່ນ 150-200 ຊມ




ຂະໜາດຂອງຂຸມ ແມ່ນ 20 x 20 ຊມ

## ວິທີການກົ່ນເບ້ຍຊາ

ອາຍຸຂອງເບ້ຍຊາທີ່ສາມາດນຳເອົາໄປປູກໄດ້



ເບ້ຍຊາອາຍຸປະມານ 7 ເດືອນປາຍເຖິງ 8 ເດືອນແມ່ນເໝາະສົມທີ່ສຸດໃນການນຳໄປປູກ (ເບ້ຍຊາທີ່ຍັງມີແກ່ນຕິດຢູ່ໃຫ້ຮັກສາແກ່ນໄວ້ ເພາະມັນຈະໃຫ້ສານອາຫານໄປລໍ່ລ້ຽງເບ້ຍຊາ)




ເບ້ຍຊາທີ່ກ້າໃສ່ໃນເບົ້າ ກ່ອນນຳໄປປູກ ໃຫ້ຫົດນ້ຳປະໄວ້ປະມານ 12 ຊົ່ວໂມງ

**ຂໍ້ລະວັງ: ເວລາປູກບໍ່ໃຫ້ດິນໃນເບົ້າແຕກອອກຈາກກັນ**



ເບ້ຍຊາທີ່ກ້າຢູ່ໜານໃຫ້ໃຊ້ໄມ້ແປງ ຈິ້ມເຂົ້າໄປໃຫ້ເຖິງພື້ນຮາກແລ້ວງັ້ຂຶ້ນມາຈຶ່ງຖອນເອົາເບ້ຍຊາ ເພື່ອຮັບປະກັນບໍ່ໃຫ້ເປືອກຮາກຊາມັນລອກ

## ການຕັດຮາກ ແລະ ໃບຊາ

ພາຍຫຼັງກົ່ນເບ້ຍຊາມາແລ້ວໃຫ້ນຳເບ້ຍຊາມາຕັດໃບຊາ, ຍອດຊາ, ຮາກແກ້ວ ແລະ ຮາກຝອຍ ຕາມວິທີການລຸ່ມນີ້:




ການຕັດໃບຊາ




ໃບຍອດອ່ອນໃຫ້ຕັດອອກ ເພາະເວລາປູກໃບອ່ອນຢູ່ຍອດຈະແຫ່ວ

ໃນກໍລະນີເບ້ຍທີ່ມີສີນ້ຳຕານຈົບຈຳຍອດ



ສຳລັບໂຕນີ້ບໍ່ໃຫ້ຕັດຍອດໃຫ້ຕັດແຕ່ໃບ






- ສັງເກດເຫັນເບ້ຍຊາຮາກຍາວເກີນໄປໃຫ້ຕັດປາຍຮາກແກ້ວອອກໃຫ້ເຫຼືອຄວາມຍາວປະມານ 12-15 ຊມ
- ຖ້າເບ້ຍໃຫຍ່ໃຫ້ຕັດປາຍຮາກແກ້ວອອກໃຫ້ເຫຼືອຄວາມຍາວປະມານ 15 ຊມ
- ໃຫ້ຕັດຮາກຝອຍດ້ານຂ້າງອອກ

## ການເອົາເບ້ຍມາຊຳນໍ້າ




ພາຍຫຼັງຕັດຮາກ ແລະ ໃບແລ້ວໃຫ້ນຳເອົາເບ້ຍຊາມາແຊ່ນໍ້າດັ່ງວິທີການລຸ່ມນີ້:

- ຮາກເບ້ຍຊາທີ່ຍາວ 10 ຊັງຕີແມັດ ໃຫ້ແຊ່ໃນນໍ້າປະມານ 8 ຊັງຕີແມັດ
- ຮາກເບ້ຍຊາທີ່ຍາວ 12 ຊັງຕີແມັດ ໃຫ້ແຊ່ໃນນໍ້າປະມານ 10 ຊັງຕີແມັດ



- ຝົນຕົກປະຈຳ ຫຼື ມີຝົນຝອຍທຸກມື້ໃຫ້ນຳໄປປູກໄດ້ເລີຍ
- ຝົນຕົກໜ້ອຍ (1-3 ມື້ຕໍ່ອາທິດ) ໃຫ້ນຳເບ້ຍທີ່ຕັດແລ້ວໄປແຊ່ນໍ້າໄວ້ 3 ວັນຈຶ່ງນຳໄປປູກ



- ບໍ່ມີຝົນຕົກຫຼາຍໃຫ້ນຳເບ້ຍທີ່ຕັດແລ້ວໄປແຊ່ນໍ້າໄວ້ 7 ວັນຈຶ່ງນຳໄປປູກ (ແຊ່ນໍ້າດົນເທົ່າໃດຕົ້ນຊາຈະອີ່ມນໍ້າໄດ້ຫຼາຍເທົ່ານັ້ນ)

ກໍລະນີແຊ່ໃນນໍ້າຢາເລັ່ງຮາກ: ຜະສົມນໍ້າຢາ 1 ແກ້ວຕໍ່ນໍ້າ 60 ລິດ (ຖ້ານໍ້າໜ້ອຍໃຫ້ຜະສົມຕາມອັດຕາສ່ວນທີ່ເໝາະສົມ), ແລ້ວແຊ່ໄວ້ 12–24 ຊົ່ວໂມງ ກໍ່ສາມາດນຳເອົາໄປລົງປູກໄດ້

## ການເອົາເບ້ຍລົງປູກ

ເນື່ອງຈາກພື້ນທີ່ສວນຊາເປັນດິນພູ ຈຶ່ງຄວນຂຸດດິນດັ່ງນີ້:








## ການບົວລະບັດຮັກສາ



ເບ້ຍຊາບໍ່ວ່າຈະໄດ້ແຊ່ນ້ຳຢາ ຫຼື ບໍ່ໄດ້ແຊ່ກໍ່ຕາມ ດີທີ່ສຸດເພື່ອຮັບປະກັນບໍ່ໃຫ້ເບ້ຍຊາຕາຍ ພາຍຫຼັງການປູກແລ້ວໃຫ້ຫົດນ້ຳມື້ບາມື້ ຈົນຄົບ 3 ເທື່ອ.

- ຫຼັງຈາກປູກເບ້ຍຊາໃນເດືອນ ມິຖຸນາແລ້ວ ເດືອນ ກັນຍາ – ຕຸລາ ໃຫ້ເສຍຫຍ້າ ແລະ ພວນດິນອອ້ມຕົ້ນຊາ
- ຈາກນັ້ນປະໄວ້ ຈົນຮອດເດືອນ ມີນາ - ເມສາ ຂອງປີຕໍ່ມາ ຈຶ່ງພວນດິນ ແລະ ໃສ່ຝຸ່ນ



ສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ທີ່ເວັບໄຊທ www.laotea.org

ວິດີໂອທີ 3: ການປູກເບ້ຍຊາ

ຄູ່ມືທີ 3: ການປູກເບ້ຍຊາ

ສະໜັບສະໜູນໂດຍ:

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ
LURAS Lao Upland Rural Advisory Service